Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 01-12
https://doi.org/10.69692/SUJMRD100301

# ທັດສະນະຄະຕິຂອງຜູ້ປະກອບການຮ້ານຂາຍຢາຕໍ່ກັບການພັດທະນາຮ້ານຂາຍຢາສູ່ມາດຕະຖານ

**ພຸດສະລິນ ມະນີວົງ*, ສຸດທິດາ ຮຸ່ງແສງຟ້າ[2] ແລະ ດາລຸນນີ ອິນດາວົງ[3]**

*ພາກວິຊາ ບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

** **ຕິດຕໍ່ພົວພັນ:** ພຸດສະລິນ ມະນີວົງ, ພະແນກສາທາລະນະສຸກ ແຂວງຫຼວງພະບາງ, ເບີໂທ: +856 20 9999 5455*

***ມູນບົດຄວາມ:***
*ການສົ່ງບົດ: 10ເມສາ 2024*
*ການປັບປຸງ: 01 ພຶດສະພາ 2024*
*ການຕອບຮັບ: 02 ກໍລະກົດ 2024*

## ບົດຄັດຫຍໍ້

ການສຶກສາໃນຄັ້ງນີ້ ມີຈຸດປະສົງສຶກສາຄວາມຮູ້ ແລະ ຄວາມເຂົ້າໃຈ ຂອງຜູ້ປະກອບການຮ້ານຂາຍຢາທີ່ຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນນະພາບ (GPP), ສຶກສາຄວາມຄິດເຫັນຂອງຜູ້ປະກອບການຮ້ານຂາຍຢາໃນນະຄອນຫຼວງພະບາງທີ່ມີຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນນະພາບ (GPP) ແລະ ສຶກສາແນວໂນ້ມພຶດຕິກຳທີ່ມີຕໍ່ການພັດທະນາເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແລະ ວິເຄາະປັດໄຈທີ່ສົ່ງຜົນຕໍ່ແນວໂນ້ມພຶດຕິກຳຕໍ່ການພັດທະນາເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP), ໂດຍມີກຸ່ມຕົວຢ່າງແມ່ນຜູ້ປະກອບການຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ຈຳນວນທັງໝົດ 77 ຮ້ານ, ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສອບຖາມ ໂດຍມີຄ່າຄວາມໜ້າເຊື່ອຖືເທົ່າກັບ 0.908, ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າຄວາມຖີ່ ຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານ ແລະ ການວິເຄາະສຳປະສິດສະຫະສຳພັນຖົດຖອຍທະວີຄູນ, ຜົນການສຶກສາພົບວ່າ :

ຜູ້ປະກອບການຮ້ານຂາຍຢາມີຄວາມຮູ້ ຄວາມເຂົ້າໃຈໂດຍລວມຕໍ່ເກນມາດຕະຖານຄຸນນະພາບ (GPP) ຢູ່ໃນລະດັບຫຼາຍ ເຊິ່ງປະກອບມີ: ເກນດ້ານການບໍລິຫານຈັດການເພື່ອຄຸນນະພາບຂອງຢາ, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບຫຼາຍ ຕໍ່ກັບເກນດ້ານການໃຫ້ບໍລິການຂອງຮ້ານຂາຍຢາ ແລະ ຕໍ່ກັບເກນດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບປານກາງຕໍ່ກັບເກນດ້ານລະບົບການເກັບຂໍ້ມູນຂອງຮ້ານຂາຍຢາ.

ຜູ້ປະກອບການໃຫ້ຄວາມສຳຄັນໃນການພັດທະນາຢູ່ໃນລະດັບຫຼາຍທີ່ສຸດ ຕໍ່ກັບການພັດທະນາຮ້ານຂາຍຢາເພື່ອໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ໄດ້ແກ່: ການພັດທະນາມາດຕະຖານດ້ານການບໍລິຫານ-ການຄວບຄຸມຄຸນນະພາບຢາ, ການພັດທະນາມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ, ດ້ານການໃຫ້ບໍລິການຂອງບຸກຄະລາກອນ ແລະ ດ້ານບໍລິການແບບມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ ແລະ ການພັດທະນາມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບ.

ແນວໂນ້ມພຶດຕິກຳທີ່ມີຕໍ່ການພັດທະນາເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ພົບວ່າມີຄວາມຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແລະ ປັດໄຈທີ່ສົ່ງຜົນຕໍ່ແນວໂນ້ມພຶດຕິກຳຄວາມຕ້ອງການທີ່ມີຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນນະພາບ GPP ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ປະກອບມີ 2 ປັດໄຈທີ່ສົ່ງຜົນຄື: ປັດໄຈມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກອນ) ແລະ ປັດໄຈມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂະອະນາໄມ ຂອງຜູ້ປະກອບການຮ້ານຂາຍຢາ.

**ຄຳສັບສຳຄັນ**: *ທັດສະນະຄະຕິ, ຮ້ານຂາຍຢາມາດຕະຖານ (GPP), ຜູ້ປະກອບການຮ້ານຂາຍຢາ.*

# Attitude of Drugstore Entrepreneurs Towards Development into a Standard Drugstores

**Phoutsalin MANIVONG*, Soudtida HOONGSENGPHA[2], Dalounny INDAVONG[3]**

*Department of Business Management, Faculty of Economics and Tourism, Souphanouvong University, Lao PDR*

****Correspondence:***
*Phoutsalin Manivong, Provincial Department of Public Health, Tel: +856 20 9999 5455*

***Article Info:***
*Submitted: April 10, 2024*
*Revised: May 01, 2024*
*Accepted: July 02, 2024*

**ABSTRACT**

The objectives of this research were to study the Perception of pharmacy Entrepreneurs towards on the Standards of Quality Pharmacy, to study the Opinion of pharmacy Entrepreneurs towards on the Standards of Quality Pharmacy (GPP) and to Study the behavioral trends towards the development of quality pharmacy (GPP) and also to analyze the factors affecting the behavioral trend to the development of a quality pharmacy (GPP). The research was conducted by using a questionnaire as an instrument for collecting data from 77 pharmacy stores in the LuangPrabang city, the Cronbach alpha reliability coefficient was 0.908, the statistics used for data analysis were frequency, percentage, mean, standard deviation, multiple regression analysis. The results found that:

The Pharmacy Entrepreneurs have an overall Cognitive of GPP standards at most levels, which include: the management standards for drug quality, pharmacy service standards and pharmacy building and hygiene standards, and for pharmacy data storage system standards was at moderate level.

The opinion of pharmacy Entrepreneurs towards the Standards of Quality Pharmacy (GPP) was found that: Entrepreneurs gave importance to the development of the pharmacy to become GPP standard pharmacy were the development of standards for administration-control of pharmacy quality in the first order, the development of standards for the premises and hygiene of the pharmacy, the development of standards in terms of personnel service, the development of service standards and participation in the community and society and the development of standards of Quality management.

The behavioral trends towards the development of quality pharmacy (GPP) were found that: there was a need to develop pharmacies into quality pharmacies (GPP), and the factors affecting the behavioral trends in the development of a quality pharmacy (GPP) include the standard factors in the service of personnel and standard factors regarding the building, location, and hygiene of the pharmacy.

**Keyword:** *Attitude, Standards of Quality Pharmacy (GPP), Pharmacy Entrepreneurs*

## 1. ພາກສະເໜີ

ຮ້ານຂາຍຢາ ແມ່ນໜ່ວຍງານໜຶ່ງຂອງລະບົບສາທາລະນະສຸກທີ່ຢູ່ໃກ້ກັບປະຊາຊົນ ເຊິ່ງບໍ່ພຽງແຕ່ເຮັດໜ້າທີ່ໃນການແຈກຢາຍຢາເທົ່ານັ້ນ ແຕ່ຍັງມີບົດບາດສຳຄັນປຽບເໝືອນເປັນທີ່ເພິ່ງ ແລະ ທາງເລືອກໜຶ່ງໃຫ້ປະຊາຊົນມາໃຊ້ບໍລິການເມື່ອມີອາການ ຫຼື ເຈັບເປັນເບື້ອງຕົ້ນ, ນອກຈາກນັ້ນ, ຮ້ານຂາຍຢາຍັງເປັນແຫຼ່ງທີ່ສາມາດໃຫ້ຄຳແນະນຳໃນການດູແລສຸຂະພາບເບື້ອງຕົ້ນ ແລະ ການສົ່ງຕໍ່ຜູ້ຊ່ຽວຊານດ້ານການປິ່ນປົວຕາມຄວາມເໝາະສົມສົມ ແລະ ຍັງພົບວ່າປະຈຸບັນພຶດຕິກຳການຊື້ຢາຮັກສາອາການເຈັບປ່ວຍຈາກຮ້ານຂາຍຢາເພີ່ມຂຶ້ນເລື່ອຍໆ (Sombutpoothon, 2021).

ໃນ ສປປ ລາວ ກໍ່ມີຮ້ານຂາຍຢາຫຼາຍແຫ່ງ ແລະ ໄດ້ແຈກຢາຍຢູ່ໃນແຕ່ລະເຂດແຂວງທົ່ວປະເທດ ແລະ ຮ້ານຂາຍຢາສ່ວນຫຼາຍແມ່ນເປີດທຸກໆມື້ ແລະ ເປັນເວລາເກືອບໝົດມື້, ຍົກເວັ້ນບາງຮ້ານອາດຈະເລືອກທີ່ຈະປິດໃນບາງມື້ ແລະ ບາງເວລາ, ເຊິ່ງໄດ້ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງການບໍລິການໄດ້ຢ່າງງ່າຍດາຍ ແລະ ເຮັດໃຫ້ປະຊາຊົນຫັນມາໃຊ້ບໍລິການໃນຮ້ານຂາຍຢາຫຼາຍຂຶ້ນ, ປັດຈຸບັນຮ້ານຂາຍຢາມີການພັດທະນາຢ່າງຕໍ່ເນື່ອງ ໂດຍແຕ່ລະຮ້ານມີຮູບແບບການໃຫ້ບໍລິການທີ່ແຕກຕ່າງກັນຂຶ້ນກັບຫຼາຍປັດໄຈ ບໍ່ວ່າຈະເປັນທຳເລທີ່ຕັ້ງຂອງຮ້ານ, ການຕົບແຕ່ງຮ້ານ, ດ້ານລາຄາຂອງຢາ ແລະ ບາງຮ້ານກໍ່ມີແພດໝໍໃຫ້ການບໍລິການ. ດັ່ງນັ້ນ, ມາດຕະຖານຮ້ານຂາຍຢາຈຶ່ງຖືກປັບປຸງເລື້ອຍໆເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກທີ່ຫຼາກຫຼາຍ ແລະ ສາມາດເປັນໜ່ວຍບໍລິການໃນເຄືອຄ່າຍລະບົບບໍລິການສຸຂະພາບຂັ້ນປະຖົມພະຍາບານພາຍໃຕ້ການສ້າງຫຼັກປະກັນສຸຂະພາບ ທີ່ປະຊາຊົນທຸກຄົນສາມາດເຂົ້າເຖິງບໍລິການດ້ານສຸຂະພາບໄດ້ຕາມຄວາມຈຳເປັນ ແລະ ມີອິດສະລະໃນການເລືອກໃຊ້. ໂດຍກະຊວງສາທາລະນະສຸກໄດ້ກຳນົດບັນດາມາດຕະການຕ່າງໆກ່ຽວກັບຮ້ານຂາຍຍ່ອຍຢາ ເຊັ່ນ: ເງື່ອນໄຂຂອງຜູ້ທີ່ໄດ້ຮັບອະນຸຍາດ, ການແບ່ງຂັ້ນຂອງຮ້ານຂາຍຍ່ອຍຢາ, ການບໍລິການຂອງຮ້ານຂາຍຍ່ອຍຢາ, ອາຄານສະຖານທີ່, ເອກະສານ ແລະ ອຸປະກອນຮັບໃຊ້ໃນຮ້ານຂາຍຍ່ອຍຢາ (Ministry of Public Health, 2016).

ຮ້ານຂາຍຢາຄຸນນະພາບຖືໄດ້ວ່າເປັນກົນໄກໜຶ່ງທີ່ກະຕຸ້ນໃຫ້ເກີດການພັດທະນາວຽກງານການບໍລິການຂອງເພສັດຊະກອນທີ່ຮ້ານຂາຍຢາຢ່າງເປັນລະບົບ ແລະ ເປັນການກະຕຸ້ນໃຫ້ເພສັດຊະກອນເກີດການຮຽນຮູ້ປະເມີນ ແລະ ພັດທະນາຕົນເອງຢ່າງຕໍ່ເນື່ອງ ໂດຍໃຊ້ແນວທາງທີ່ການກຳນົດໃນມາດຕະຖານຮ້າຍຂາຍຢາ ທັງເປັນເຄື່ອງມືໃນການສ້າງສິ່ງຈູງໃຈ ແລະ ພັດທະນາສູ່ຄວາມສຳເລັດ. ໂດຍຮ້ານຂາຍຢາຄຸນນະພາບ ເປັນການບໍລິການທີ່ແຕກຕ່າງກັບຮ້າຍຂາຍຢາທົ່ວໄປຄື: ບໍ່ໄດ້ເນັ້ນສະເພາະແຕ່ການຂາຍຢາແຕ່ເປັນການໃຫ້ບໍລິການແບບວິຊາຊີບທີ່ບໍລິການທັງຜະລິດຕະພັນ ແລະ ສາມາດໃຫ້ຄຳປຶກສາ-ແນະນຳ ເຮັດໃຫ້ເກີດການນຳໃຊ້ຢາທີ່ມີຄວາມເໝາະສົມ ເຮັດໃຫ້ຄຸນນະພາບຊີວິດຂອງປະຊາຊົນມີສຸກຂະພາບດີຂຶ້ນ ແລະ ສາມາດໃຫ້ບໍລິການໄດ້ກົງກັບຄວາມຄາດຫວັງຂອງຜູ້ຮັບບໍລິການຫຼາຍທີ່ສຸດ (Wannathong, 2018). ໃນປະຈຸບັນຮ້ານຂາຍຢາໄດ້ແບ່ງອອກເປັນ 2 ປະເພດຫຼັກຄື: ຮ້ານຂາຍຢາທົ່ວໄປ ແລະ ຮ້ານຂາຍຢາຄຸນນະພາບ (GPP) ໂດຍຮ້ານຢາຄຸນນະພາບແມ່ນຈະເພີ່ມເກນເລື່ອງເອກະສານ ເພື່ອເນັ້ນການຮຽນຮູ້ຂອງຜູ້ປະຕິບັດງານ ແລະ ລົດຄວາມສ່ຽງຂອງຜູ້ປ່ວຍ ລວມເຖິງເພີ່ມມາດຕະຖານການໃຫ້ບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ ເຊິ່ງຖືໄດ້ວ່າຮ້ານຂາຍຢາຄຸນນະພາບ ແມ່ນມີມາດຕະຖານ ແລະ ຄຸນນະພາບການໃຫ້ບໍລິການທີ່ຫຼາຍກວ່າຮ້ານຂາຍຢາທົ່ວໄປ ໃນປະຈຸບັນຮ້ານຢາຄຸນນະພາບທົ່ວແຂວງຫຼວງພະບາງ ຍັງບໍ່ທັນມີຮ້ານຂາຍຢາທີ່ເປັນຮ້ານຂາຍຢາຄຸນນະພາບ ເນື່ອງວ່າພາກສ່ວນທີ່ກ່ຽວຂ້ອງເຄີຍລົງສຳຫຼວດ ແລະ ຈັດຕັ້ງປະຕິບັດ

ແຕ່ບໍ່ສຳເລັດ. ດັ່ງນັ້ນ, ຈຶ່ງໄດ້ກັບຄືນນຳສຶກສາອີກຄັ້ງຈາກຈຳນວນຮ້ານຂາຍຢາໃນປະຈຸບັນທົ່ວແຂວງ 178 ຮ້ານ ແລະ ຢູ່ໃນນະຄອນຫຼວງພະບາງ 77 ຮ້ານ (ພະແນກສາທາລະນະສຸກແຂວງ, 2023) ເຊິ່ງໃນການພັດທະນາຮ້ານຂາຍຢາ ໃຫ້ມີມາດຕະຖານຄຸນນະພາບ ນັ້ນແມ່ນໄດ້ມີການພັດທະນາຢ່າງຕໍ່ເນື່ອງຕັ້ງແຕ່ອະດີດຈົນເຖິງປະຈຸບັນ ໂດຍແຕ່ລະຮ້ານມີຮູບແບບການໃຫ້ບໍລິການທີ່ແຕກຕ່າງກັນ ຂຶ້ນກັບປັດໃຈຫຼາຍຢ່າງ ບໍ່ວ່າຈະເປັນທຳເລທີ່ຕັ້ງຂອງຮ້ານ, ການຕົບແຕ່ງຮ້ານ, ດ້ານລາຄາ, ການມີເພສັດຊະກອນທາງການແພດປະຕິບັດໜ້າທີ່ ເປັນຕົ້ນ, ຄວາມແຕກຕ່າງຂອງຄຸນນະພາບການບໍລິການຂອງຮ້ານຂາຍຢາເປັນສິ່ງໜຶ່ງທີ່ຜູ້ບໍລິໂພກໃຫ້ຄວາມສົນໃຈ. ດັ່ງນັ້ນ,ມາດຕະຖານຮ້ານຂາຍຢາຈຶ່ງຖືກພັດທະນາຂຶ້ນ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກທີ່ຫຼາກຫຼາຍ ລວມທັງເພື່ອພັດທະນາຮ້ານຂາຍຢາໃຫ້ສາມາດເປັນໜ່ວຍບໍລິການໃນເຄືອຄ່າຍລະບົບບໍລິການສຸຂະພາບປະຖົມພະຍາບານ ພາຍໃຕ້ການສ້າງຫຼັກປະກັນສຸຂະພາບ ທີ່ປະຊາຊົນທຸກຄົນສາມາດເຂົ້າເຖິງບໍລິການດ້ານສຸຂະພາບໄດ້ຕາມຄວາມຈຳເປັນ ແລະ ມີອິດສະຫຼະໃນການເລືອກໃຊ້ບໍລິການ. ສະນັ້ນ, ເພື່ອໃຫ້ເກີດການບໍລິການທີ່ດີ ແລະ ມີຄຸນນະພາບ ການມີລະບົບກວດສອບ ແລະ ຄວບຄຸມຄຸນນະພາບບໍລິການ ຈຶ່ງຖືເປັນສິ່ງທີ່ມີຄວາມສຳຄັນເປັນຢ່າງຍິ່ງ (ສຳນັກງານໂຄງການພັດທະນາຮ້ານຂາຍຢາ ກອງຄວບຄຸມຢາ ຄະນະກຳມະການອາຫານ ແລະ ຢາ, 2008). ເຊິ່ງໃນປະຈຸບັນການຄວບຄຸມມາດຕະຖານຂອງຮ້ານຂາຍຢາແມ່ນຈະຄວບຄຸມໂດຍໃຊ້ຫຼັກວິທີ Good Pharmacy Practice (GPP) ທີ່ຢູ່ໃນຂໍ້ຕົກລົງຂອງກະຊວງສາທາລະນະສຸກ ວ່າດ້ວຍຮ້ານຂາຍຍ່ອຍຢາ (ສະບັບປັບປຸງ) ເລກທີ 2922/ສທ, ລົງວັນທີ 21 ກັນຍາ 2016, ເຊິ່ງໄດ້ລະບຸຢູ່ຂໍ້ຕົກລົງສະບັບນີ້ເຮັດໃຫ້ຮ້ານຂາຍຍ່ອຍຢາ ປະຈຸບັນທີ່ໄດ້ຮັບອານຸຍາດສ້າງຕັ້ງຂຶ້ນຈະຕ້ອງຜ່ານການປະເມີນ (GPP) ກ່ອນເພື່ອເປັນການຢັ້ງຢືນໃຫ້ອອກໃບອານຸຍາດໄດ້, ໃນຄະນະທີ່ຮ້ານຂາຍຍ່ອຍຢາທີ່ໄດ້ຮັບອານຸຍາດກ່ອນການປະກາດຈະໄດ້ຮັບການຜ່ອນຜັນແຕ່ຈະຕ້ອງໄດ້ປະຕິບັດຕາມຫຼັກວິທີຂອງ (GPP) ຢ່າງເຕັມຮູບແບບໃນຂໍ້ກຳນົດຕ່າງໆ. ນອກຈາກ (GPP) ທີ່ໃຊ້ເປັນເກນສຳຫຼັບການຄວບຄຸມມາດຕະຖານສຳຫຼັບຮ້ານຂາຍຍ່ອຍຢາໂດຍທົ່ວໄປແລ້ວ ປະຈຸບັນ ຍັງໄດ້ມີໂຄງການ 'ຮ້ານຂາຍຢາມາດຕະຖານຄຸນນະພາບ' ເຊິ່ງເປັນໂຄງການທີ່ເຊີນຊວນຮ້ານຂາຍຢາເຂົ້າຮ່ວມຕາມຄວາມສະມັກໃຈ ເກນຂອງຮ້ານຂາຍຢາມາດຕະຖານຄຸນນະພາບຈະມີແນວທາງສອດຄ່ອງໄປຕາມ (GPP) ໂດຍການຮ່ວມມືລະຫວ່າງກະຊວງສາທາລະນະສຸກ ແລະ ກະຊວງຍຸຕິທຳ ກໍ່ໄດ້ມີການສົມທົບກັນເພື່ອຮ່າງກົດໝາຍ ວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ປີ 2000). ຈາກການຄວບຄຸມມາດຕະຖານຂອງຮ້ານຂາຍຢາໃນປະຈຸບັນ ເຮັດໃຫ້ສາມາດຈຳແນກຮ້ານຂາຍຢາອອກເປັນຮ້ານຂາຍຢາທົ່ວໄປ ແລະ ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ໂດຍຮ້ານຂາຍຢາມາດຕະຖານຄຸນນະພາບ ຈະເພີ່ມເກນເລື້ອງເອກະສານເພື່ອເນັ້ນການຮຽນຮູ້ຂອງຜູ້ປະຕິບັດງານ ແລະ ລົດຄວາມສ່ຽງຂອງຜູ້ປ່ວຍໃນການດຳເນີນງານ ລວມເຖິງເພີ້ມມາດຕະຖານການໃຫ້ບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ, ຈຶ່ງຖືວ່າ ຮ້ານຂາຍຢາມາດຕະຖານຄຸນນະພາບ ມີມາດຕະຖານ ແລະ ຄຸນນະພາບ ການໃຫ້ບໍລິການທີ່ຫຼາຍກວ່າຮ້ານຂາຍຢາທົ່ວໄປ ເຊິ່ງໃນປະຈຸບັນຮ້ານຂາຍຢາມາດຕະຖານຄຸນນະພາບທົ່ວແຂວງ ຫຼວງພະບາງ ຍັງບໍ່ທັນມີເນື່ອງວ່າພາກສ່ວນທີ່ກ່ຽວຂ້ອງເຄີຍລົງສຳຫຼວດ ແລະ ຈັດຕັ້ງປະຕິບັດແຕ່ບໍ່ສຳເລັດ, ດັ່ງນັ້ນຈຶ່ງໄດ້ກັບຄືນນຳສຶກສາອີກຄັ້ງຈາກຈຳນວນຮ້ານຂາຍຢາໃນປະຈຸບັນທົ່ວແຂວງ 178 ຮ້ານ (ຂະແໜງອາຫານ ແລະ ຢາ ພະແນກສາທາລະນະສຸກແຂວງ 2023; ຄະນະກຳມະການອາຫານ ແລະ ຢາ, 2018) ເຖິງແມ່ນວ່າຮ້ານຂາຍຢາຈະຈັດເປັນໜ່ວຍງານໜຶ່ງທາງດ້ານສາທາລະນະສຸກສຳລັບການດູແລ

ເບິ່ງແຍງສຸຂະພາບຂອງຜູ້ປ່ວຍເບື້ອງຕົ້ນ ແຕ່ອີກດ້ານໜຶ່ງ ຮ້ານຂາຍຢາເອງກໍ່ຈັດເປັນອົງກອນທຸລະກິດທີ່ຈັດຕັ້ງຂຶ້ນ ເພື່ອສະແຫວງຫາຜົນກໍາໄລ ການມີຜົນການດໍາເນີນງານທີ່ດີ ຈຶ່ງກາຍເປັນອີກສິ່ງໜຶ່ງທີ່ຮ້ານຂາຍຢາໃຫ້ຄວາມສໍາຄັນ.

ດັ່ງນັ້ນ, ການພັດທະນາມາດຕະຖານຄຸນນະພາບ ຂອງຮ້ານຂາຍຢາ ແມ່ນການປັບປຸງຄຸນນະພາບໃນການໃຫ້ ບໍລິການທີ່ຈະຊ່ວຍໃຫ້ລູກຄ້າໄດ້ຮັບການບໍລິການທີ່ດີ ແລະ ມີປະສິດທິພາບ ອັນຈະສົ່ງຜົນໃຫ້ຮ້ານຂາຍຢາມີຜົນການດໍາ ເນີນງານທີ່ດີອີກດ້ວຍ. ດັ່ງນັ້ນ, ເພື່ອເປັນການສ້າງແຮງຈູງ ໃຈໃຫ້ຜູ້ປະກອບການມີສ່ວນໃນການພັດທະນາຮ້ານຂາຍ ຢາຂອງຕົນໃຫ້ມີຄຸນນະພາບກ້າວສູ່ມາດຕະຖານ (GPP). ດ້ວຍເຫດຜົນຂ້າງເທິງນີ້ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈ ຄົ້ນຄວ້າເຖິງ ທັດສະນະຄະຕິຂອງຜູ້ປະກອບການຮ້ານຂາຍ ຢາທີ່ມີຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນ ນະພາບ (GPP) ໃນແຂວງ ຫຼວງພະບາງ ໂດຍມີຈຸດປະສົງ ໃນການຄົ້ນຄວ້າຄັ້ງນີ້ມີ 3 ຈຸດປະສົງຄື:

1) ສຶກສາຄວາມຮູ້ ຄວາມເຂົ້າໃຈຂອງຜູ້ປະກອບການ ຮ້ານຂາຍຢາຕໍ່ກັບມາດຕະຖານການປະເມີນຮ້ານຂາຍຢາ ຍ່ອຍເອກະຊົນຂອງພະແນກສາທາແຂວງຫຼວງພະບາງ.

2) ສຶກສາຄວາມຄິດເຫັນຂອງຜູ້ປະກອບການຮ້ານ ຂາຍຢາໃນນະຄອນຫຼວງພະບາງຕໍ່ກັບມາດຕະຖານຮ້ານ ຂາຍຢາຄຸນນະພາບ (GPP).

3)ສຶກສາປັດໄຈທີ່ສົ່ງຜົນຕໍ່ແນວໂນ້ມພຶດຕິກໍາຕໍ່ການ ພັດທະນາເປັນຮ້ານຂາຍຢາຄຸນນະພາບ (GPP).

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາ

ການສຶກສາໃນຄັ້ງນີ້ ເປັນການສຶກສາໃນລັກສະນະ ການສໍາຫຼວດ (Survey research) ໂດຍໃຊ້ແບບສອບ ຖາມ (Questionnaires) ເປັນເຄື່ອງມືໃນການເກັບ ລວບລວມຂໍ້ມູນຈາກກຸ່ມຕົວຢ່າງເປົ້າໝາຍ ເຊິ່ງມີລັກສະນະ ເປັນແບບຊ່ວງປະມານຄ່າ (Rating Scale) ແບ່ງອອກເປັນ 5 ລະດັບ ຕາມວິທີຂອງ Likert Scales ໂດຍມີຄ່າຄວາມໜ້າ ເຊື່ອຖື (Cronbach's Alpha) ເທົ່າກັບ 0.908 ແລະ ທຸກ ຂໍ້ຄໍາຖາມແມ່ນຄ່າ IOC ມີຄ່າສູງກວ່າ 0.6 ຂຶ້ນໄປ.

### 2.2 ກຸ່ມຕົວຢ່າງ

ດໍາເນີນການຄົ້ນຄວ້າໂດຍການກໍານົດປະຊາກອນ ແມ່ນຜູ້ປະກອບການຮ້ານຂາຍຢາທີ່ໄດ້ຮັບໃບອານຸຍາດ ສ້າງຕັ້ງຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2, ແລະ ຂັ້ນ 3 ໃນ ເຂດນະຄອນຫຼວງພະບາງ ທັງໝົດມີ 77 ຮ້ານ (ຂັ້ນ 1 ມີ 43 ຮ້ານ; ຂັ້ນ 2 ມີ 23 ຮ້ານ; ຂັ້ນ 3 ມີ 11 ຮ້ານ) ແລະ ໃນ ການກໍານົດຂະໜາດກຸ່ມຕົວຢ່າງ ເນື່ອງຈາກຜູ້ປະກອບການ ຮ້ານຂາຍຢາທີ່ໄດ້ຮັບໃບອານຸຍາດສ້າງຕັ້ງຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2, ແລະ ຂັ້ນ 3 ໃນນະຄອນຫຼວງພະບາງ ມີຈໍາ ນວນໜ້ອຍ. ດັ່ງນັ້ນ, ໃນການຄົ້ນຄວ້າແມ່ນຈະໄດ້ກໍານົດ ເອົາທັງໝົດຂອງປະຊາກອນ (100% ຂອງປະຊາກອນ) ໂດຍອີງຕາມເກນຂອງ Gay & Airasian (2003).

### 2.3 ການເກັບລວມລວມຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນນໍາໃຊ້ວິທີການສຶກສາ ຄົ້ນຄວ້າທາງປະລິມານ (Quantitative Research), ແລະ ການຄົ້ນຄວ້າໃນຄັ້ງນີ້ແມ່ນເລີ່ມເກັບກໍາຂໍ້ມູນ ແຕ່ເດືອນ ມິຖຸນາ 2023 - ມີນາ 2024 ດ້ວຍວິທີການແຈກແບບສອບ ຖາມແບບສະເພາະເຈາະຈົງ ແລະ ແຈກຢາຍແບບງ່າຍດາຍ.

### 2.4 ການວິເຄາະຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນນໍາໃຊ້ວິທີການສຶກສາ ຄົ້ນຄວ້າທາງປະລິມານ (Quantitative Research) ດ້ວຍ ການນໍາໃຊ້ໂປຼແກມສໍາເລັດຮູບທາງສະຖິຕິ SPSS version 22.0 ໃນວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມ ແລ້ວ ໄດ້ນໍາເອົາຂໍ້ມູນດັ່ງກ່າວມາດໍາເນີນການວິເຄາະຊອກຫາຄ່າ ທາງສະຖິຕິຕ່າງໆ (Siljiru, T. 2010) ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນ ມາດຕະຖານ (Std.Deviation) ແລະ ວິເຄາະສົມຜົນ ການຖົດຖອຍແບບໂລຈິດສະຕິກ (Binary Logistics

Regression) ເພື່ອການພະຍາກອນຫາປັດໄຈທີ່ມີຄວາມສໍາພັນຕໍ່ການພັດທະນາເປັນຮ້ານຂາຍຢາຄຸນນະພາບ (GPP).

**3. ຜົນໄດ້ຮັບ**

1) ລະດັບຄວາມຮູ້ ຄວາມເຂົ້າໃຈໂດຍລວມ ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ທີ່ມີຕໍ່ເກນມາດຕະຖານຄຸນນະພາບ GPP ແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າ 3.77 ແລະ ຄ່າ Std. ເທົ່າ 0.390 ເມື່ອພິຈາລະນາເກນມາດຕະຖານຍ່ອຍແລ້ວເຫັນວ່າ: ເກນມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບຂອງຢາ ແມ່ນມີຄວາມຮູ້ຄວາມເຂົ້າໃຈຫຼາຍທີ່ສຸດ ມີຄ່າສະເລ່ຍເທົ່າ 4.26 ແລະ ຄ່າ Std. ເທົ່າ 0.409, ຮອງລົງມາແມ່ນເກນມາດຕະຖານດ້ານການໃຫ້ບໍລິການຂອງຮ້ານຂາຍຢາ ແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າ 3.93 ແລະ ຄ່າ Std. ເທົ່າ 0.443, ຖັດມາແມ່ນເກນມາຕະຖານດ້ານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ມີຄ່າສະເລ່ຍເທົ່າ 3.83 ແລະ ຄ່າ Std. ເທົ່າ 0.738 ເຊິ່ງຈັດເປັນຄວາມຮູ້ ຄວາມເຂົ້າໃນລະດັບຫຼາຍເຊັ່ນກັນ ແລະ ສຸດທ້າຍແມ່ນເກນມາດຕະຖານດ້ານດ້ານລະບົບການເກັບຂໍ້ມູນຂອງຮ້ານຂາຍຢາ ມີຄ່າສະເລ່ຍເທົ່າ 3.07 ແລະ ຄ່າ Std. ເທົ່າ 0.770 ເຊິ່ງຈັດເປັນຄວາມຮູ້ ຄວາມເຂົ້າໃຈໃນລະດັບປານກາງ.

2) ລະດັບຄວາມຄິດເຫັນໂດຍລວມຂອງຜູ້ປະກອບການທີ່ມີຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນນະພາບ GPP ເຊິ່ງຜູ້ປະກອບການໃຫ້ຄວາມສໍາຄັນໃນການພັດທະນາຢູ່ໃນລະດັບຫຼາຍທີ່ສຸດ ຕໍ່ກັບການພັດທະນາຮ້ານຂາຍຢາເພື່ອໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ GPP ມີຄ່າສະເລ່ຍເທົ່າ 4.45 ເຊິ່ງໃນນີ້ເຫັນວ່າ: ຜູ້ປະກອບການໃຫ້ຄວາມສໍາຄັນຕໍ່ການພັດທະນາມາດຕະຖານດ້ານການບໍລິຫານ-ຄວບຄຸມຄຸນນະພາບຢາໃນລະດັບຫຼາຍທີ່ສຸດ ໃນລໍາດັບທໍາອິດ ມີຄ່າສະເລ່ຍເທົ່າ 4.58, ຮອງລົງມາແມ່ນໃຫ້ຄວາມສໍາຄັນໃນການພັດທະນາມາດຕະຖານດ້ານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ມີຄ່າສະເລ່ຍເທົ່າ 4.57, ຖັດມາແມ່ນໃຫ້ຄວາມສໍາຄັນພັດທະນາມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກໍາ) ມີຄ່າສະເລ່ຍເທົ່າ 4.49, ໃຫ້ຄວາມສໍາຄັນພັດທະນາມາດຕະຖານດ້ານບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ ມີຄ່າສະເລ່ຍເທົ່າ 4.31 ແລະ ລໍາດັບສຸດທ້າຍແມ່ນໃຫ້ຄວາມສໍາຄັນໃນການພັດທະນາມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບ ມີຄ່າສະເລ່ຍເທົ່າ 4.29.

3) ແນວໂນ້ມພຶດຕິກໍາໃນການຈັດຕັ້ງປະຕິບັດພັດທະນາເປັນຮ້ານຂາຍຢາສູ່ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ເຫັນວ່າ: ຜູ້ປະກອບການຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ສ່ວນຫຼາຍແມ່ນເປັນຜູ້ທີ່ເຄີຍໄດ້ຮັບຮູ້ຂໍ້ມູນກ່ຽວກັບຮ້ານຂາຍຢາມາດຕະຖານຄຸນນະພາບ GPP ເທົ່າກັບ 68.1% ແລະ ສໍາລັບເປັນຜູ້ທີ່ບໍ່ຮັບຮູ້ກ່ຽວກັບຮ້ານຂາຍຢາມາດຕະຖານຄຸນນະພາບ GPP ເທົ່າກັບ 31.9%. ແນວໂນ້ມພຶດຕິກໍາມີຄວາມຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ເທົ່າກັບ 58% ແລະ ບໍ່ມີຄວາມຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ເທົ່າກັບ 42% ໂດຍໃຫ້ເຫດຜົນທີ່ບໍ່ມີຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນຍ້ອນເຂົ້າໃຈວ່າການເປັນຮ້ານຂາຍຢາມາດຕະຖານຄຸນະພາບ (GPP) ແມ່ນເປັນການບໍ່ມີຜົນປະໂຫຍດຕໍ່ການດໍາເນີນທຸລະກິດ ເທົ່າກັບ 36.2%, ຮອງລົງມາແມ່ນໃຫ້ເຫດຜົນທີ່ວ່າການເປັນຮ້ານຂາຍຢາມາດ ຕະຖານຄຸນນະພາບ (GPP) ແມ່ນບໍ່ມີຄວາມສໍາຄັນ ແລະ ບໍ່ຈໍາເປັນ ເທົ່າກັບ 34.8%, ຖັດມາແມ່ນເປັນການເສຍຄ່າໃຊ້

ຈ່າຍໃນການພັດທະນາ ປັບແປງຮ້ານ ແລະ ເປັນການເຮັດໃຫ້ຕົ້ນທຶນການຂາຍເພີ່ມສູງຂຶ້ນ ເທົ່າກັບ 30.4 % ເທົ່າກັນ, ມີຄວາມຮູ້ສຶກສາວ່າຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ຍັງບໍ່ເປັນທີ່ຍອມຮັບ ຫຼື ຮູ້ຈັກໃນສັງຄົມບ້ານເຮົາ ເທົ່າກັບ 26.1% ແລະ ສຸດທ້າຍແມ່ນໃຫ້ເຫດຜົນວ່າລູກຄ້າຍັງບໍ່ທັນໃຫ້ຄວາມສຳຄັນກັບຮ້ານຂາຍຢາມາດຕະຖານຄຸນນະພາບ ເທົ່າກັບ 24.6%. ສຳລັບເຫດຜົນທີ່ຕ້ອງການເປັນຮ້ານຂາຍຢາມາດຕຖານຄຸນນະພາບ (GPP) ແມ່ນມີຜົນປະໂຫຍດຕໍ່ການດຳເນີນທຸລະກິດ ເທົ່າກັບ 52.2%, ຮອງລົງມາແມ່ນໃຫ້ເຫດຜົນວ່າການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນສາມາດສ້າງຄວາມເຊື່ອໝັ້ນໃຫ້ກັບຮ້ານຫຼາຍຂຶ້ນ ແລະ ສາມາດສ້າງຊື່ສຽງ ຫຼື ເຮັດໃຫ້ຮ້ານເປັນທີ່ຮູ້ຈັກເພີ່ມຂຶ້ນ ເທົ່າກັບ 49.3% ເທົ່າກັນ , ຖັດມາແມ່ນໃຫ້ເຫດຜົນວ່າການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ລູກຄ້າມາໃຊ້ບໍລິການຮ້ານຂາຍຢາເພີ່ມຂຶ້ນ ເທົ່າກັບ 47.8% ເທົ່າກັນ ແລະ ສຸດທ້າຍແມ່ນໃຫ້ເຫດຜົນວ່າການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນສາມາດສ້າງຄວາມໜ້າເຊື່ອຖືການຍອມຮັບໃນສັງຄົມສູງຂຶ້ນ ເທົ່າກັບ 44.9%.

ປັດໄຈການພັດທະນາດ້ານການບໍລິຫານຈັດການເພື່ອຄຸນນະພາບ ($X_2$) ມີຄ່າ Sig. ເທົ່າກັບ 0.400 ແລະ ຄ່າສຳປະສິດຖົດຖອຍເທົ່າ -3.036, ປັດໄຈການພັດທະນາດ້ານການບໍລິຫານ-ຄວບຄຸມຄຸນນະພາບຢາ ($X_4$) ມີຄ່າ Sig. ເທົ່າກັບ 0.288 ແລະ ຄ່າສຳປະສິດຖົດຖອຍເທົ່າ 1.298, ປັດໄຈການພັດທະນາດ້ານບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ ($X_5$) ມີຄ່າ Sig. ເທົ່າກັບ 0.197 ແລະ ຄ່າສຳປະສິດຖົດຖອຍເທົ່າ -1.169 ເຊິ່ງມີຄ່າໃຫຍ່ກວ່າ 0.10 ໝາຍຄວາມວ່າປັດໄຈການພັດທະນາດ້ານການບໍລິຫານຈັດການເພື່ອຄຸນນະພາບ, ປັດໄຈການພັດທະນາດ້ານການບໍລິຫານ-ຄວບຄຸມຄຸນນະພາບຢາ ແລະ ປັດໄຈການພັດທະນາດ້ານບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມບໍ່ສົ່ງຜົນຕໍ່ແນວໂນ້ມພຶດຕິດກຳຄວາມຕ້ອງການພັດທະນາຮ້ານຂາຍຢາໃຫ້ກ້າວສູ່ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ເມື່ອພິຈາລະນາ ຄ່າ Sig. ພົບວ່າຄ່າຄົງທີ່ (Constant) ມີຄ່າ Sig. ເທົ່າກັບ 0.225 ແລະ ປັດໄຈການພັດທະນາດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມ ຂອງຮ້ານຂາຍຢາ ($X_1$) ມີຄ່າ Sig. ເທົ່າກັບ 0.069 ແລະ ຄ່າສຳປະສິດຖົດຖອຍເທົ່າ -3.036 ແລະ ປັດໄຈການພັດທະນາດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກຳ) (X3) ມີຄ່າ Sig. ເທົ່າກັບ 0.035 ແລະ ແລະ ຄ່າສຳປະສິດຖົດຖອຍເທົ່າ 3.171 ເຊິ່ງເຫັນວ່າ ຄ່າ Sig. ທັງສອງປັດໄຈເປັນຄ່ານ້ອຍກວ່າ 0.05 ນັ້ນໝາຍຄວາມວ່າ ປັດໄຈການພັດທະນາດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມ ຂອງຮ້ານຂາຍຢາ ແລະ ປັດໄຈການພັດທະນາດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກຳ) ສົ່ງຜົນແນວໂນ້ມພຶດຕິດກຳຄວາມຕ້ອງການພັດທະນາຮ້ານຂາຍຢາໃຫ້ກ້າວສູ່ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ.

## 4. ວິພາກຜົນ

ຜົນຂອງການສຶກສາຄວາມຮູ້ ແລະ ຄວາມເຂົ້າໃຈທີ່ມີຕໍ່ເກນມາດຕະຖານຄຸນນະພາບ GPP ຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ພົບວ່າ: ແມ່ນມີຄວາມຮູ້ ແລະ ຄວາມເຂົ້າໃຈໂດຍລວມຕໍ່ເກນມາດຕະຖານຄຸນນະພາບ GPP ຢູ່ໃນລະດັບຫຼາຍ ເຊິ່ງໃນນີ້ແມ່ນມີຄວາມຮູ້ ແລະ ຄວາມເຂົ້າໃຈມີຫຼາຍທີ່ສຸດຕໍ່ກັບເກນມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບຂອງຢາ, ຮອງລົງມາແມ່ນມີຄວາມຮູ້ ແລະ ຄວາມເຂົ້າໃຈໃນລະດັບຫຼາຍ ຕໍ່ກັບເກນມາດຕະຖານດ້ານການໃຫ້ບໍລິການຂອງຮ້ານຂາຍຢາ ແລະ ຕໍ່ກັບເກນມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ແລະ ສຸດທ້າຍແມ່ນມີຄວາມຮູ້

ຄວາມເຂົ້າໃຈໃນລະດັບປານກາງ ຕໍ່ກັບເກນມາດຕະຖານດ້ານລະບົບການເກັບຂໍ້ມູນຂອງຮ້ານຂາຍຢາ ໂດຍສອດຄ່ອງກັບຜົນການຄົ້ນຄວ້າຂອງ Chalongsuk et al (2007) ໄດ້ສຳຫຼວດຄວາມຄິດເຫັນຂອງຜູ້ປະກອບການຮ້ານຂາຍຢາ ຕໍ່ອຸປະສັກໃນການເຂົ້າຮ່ວມໂຄງການ ຮ້ານຢາຄຸນນະພາບ ຜົນການຄົ້ນຄວ້າພົບວ່າ: ຜູ້ປະກອບການສ່ວນໃຫ່ຍມີຄວາມຮູ້ຄວາມ ແລະ ຄວາມເຂົ້າໃຈໃນຫຼັກການຂອງໂຄງການຮ້ານຢາຄຸນນະພາບດີ ແຕ່ມີບາງສ່ວນຍັງເຂົ້າໃຈລາຍລະອຽດຂອງມາດຕະຖານຮ້ານຢາຄຸນນະພາບບໍ່ຖືກຕ້ອງ.

ຜູ້ປະກອບການມີຄວາມຄິດເຫັນດ້ານຄວາມສຳຄັນໃນການພັດທະນາຢູ່ໃນລະດັບຫຼາຍທີ່ສຸດ ແມ່ນການພັດທະນາຮ້ານຂາຍຢາເພື່ອໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ GPP, ຄວາມສຳຄັນຕໍ່ການພັດທະນາມາດຕະຖານດ້ານການບໍລິຫານ-ຄວບຄຸມຄຸນນະພາບຢາໃນລະດັບຫຼາຍທີ່ສຸດໃນລຳດັບທຳອິດ, ຮອງລົງມາແມ່ນໃຫ້ຄວາມສຳຄັນໃນການພັດທະນາມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ, ຖັດມາແມ່ນໃຫ້ຄວາມສຳຄັນພັດທະນາມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ, ໃຫ້ຄວາມສຳຄັນພັດທະນາມາດຕະຖານດ້ານບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະສັງຄົມ ແລະ ລຳດັບສຸດທ້າຍແມ່ນໃຫ້ຄວາມສຳຄັນໃນການພັດທະນາມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບ ໂດຍສອດຄ່ອງກັບຜົນການຄົ້ນຄວ້າ ຂອງ Noppadolladaporn (2005) ພົບວ່າຜູ້ປະກອບການສ່ວນໃຫຍ່ມີສັກກະຍະພາບຄວາມພ້ອມໃນການປະຕິບັດຕາມເກນມາດຕະຖານຮ້ານຂາຍຢາຂອງເພສັດຊະກຳ ແລະ ໃຫ້ຄວາມສຳຄັນຕໍ່ມາດຕະຖານທຸກມາດຕະຖານ ຍົກເວັ້ນມາດຕະຖານຍ່ອຍບາງມາດຕະຖານທີ່ຜູ້ປະກອບການຫຼາຍກວ່າເຄິ່ງໜຶ່ງຍັງບໍ່ທັນມີຄວາມພ້ອມ ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Parinyarux & Yotsombut (2022) ແລະ Urairat (2022) ທີ່ສຶກສາພົບວ່າ ຂໍ້ກຳນົດໃນທຸກດ້ານຂອງມາດຕະຖານຮ້ານຢາຄຸນນະພາບ (GPP) ແມ່ນມີຄວາມສຳຄັນ ໃນລະດັບຫຼາຍ. ເຊິ່ງໃນນັ້ນ, ປະກອບມີມາດຕະຖານຍ່ອຍໃນແຕ່ລະດ້ານທີ່ເນັ້ນຄວາມສຳຄັນ ເຊັ່ນ: ດ້ານການໃຫ້ບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະສັງຄົມ; ດ້ານການໃຫ້ບໍລິການຂອງເພສັດຕະກຳ ແລະ ດ້ານການປະຕິບັດຕາມກົດລະບຽບ ແລະ ຈັນຍາບັນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Urairat (2022) ທີ່ພົບວ່າ: ຄວາມສຳຄັນຕໍ່ມາດຕະຖານຍ່ອຍໃນແຕ່ລະດ້ານປະກອບມີ: ດ້ານບຸກຄະລາກອນ, ດ້ານການບໍລິການ ແລະ ດ້ານການປະຕິບັດຕາມຈັນຍາບັນເພສັດຕະກຳ. ສ່ວນດ້ານສະຖານທີ່, ອຸປະກອນ ແລະ ສິ່ງສະໜັບສະໜູນການໃຫ້ບໍລິການ ແມ່ນສອດຄ່ອງກັບຜົນການຄົ້ນຄວ້າຂອງ Petchboun (2019) ພົບວ່າ: ຮ້ານຂາຍຢາໃນ 5 ຈັງຫວັດຊາຍແດນພາກໃຕ້ ຈຳນວນ 257 ຮ້ານ ແມ່ນໄດ້ໃຫ້ຄວາມສຳຄັນຕໍ່ກັບມາດຕະຖານຮ້ານຂາຍຢາຄຸນນະພາບດ້ານ ດ້ານສະຖານທີ່, ອຸປະກອນ ແລະ ສິ່ງສະໜັບສະໜູນບໍລິການເປັນອັນດັບທຳອິດແລະຫຼາຍກ່ວາມາດຕະຖານອື່ນໆ.

ການວິເຄາະພຶດຕິກຳໃນການພັດທະນາຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ພົບວ່າ: ສາເຫດທີ່ຜູ້ປະກອບການຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ຍັງມີບາງສ່ວນທີ່ບໍ່ມີຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນຍ້ອນເຂົ້າໃຈວ່າການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນເປັນການບໍ່ມີຜົນປະໂຫຍດຕໍ່ການດຳເນີນທຸລະກິດ, ບໍ່ມີຄວາມສຳຄັນ ແລະ ບໍ່ຈຳ, ເປັນການເສຍຄ່າໃຊ້ຈ່າຍໃນການພັດທະນາ ປັບແປງຮ້ານ ແລະ ເປັນການເຮັດໃຫ້ຕົ້ນທຶນການຂາຍເພີ່ມສູງຂຶ້ນ ມີຄວາມຮູ້ສຶກວ່າຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ຍັງບໍ່ເປັນທີ່ຍອມຮັບ ຫຼື ຮູ້ຈັກໃນສັງຄົມບ້ານເຮົາ ແລະ ລູກຄ້າຍັງບໍ່ທັນໃຫ້ຄວາມສຳຄັນກັບຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ເຊິ່ງມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຂອງ Onprasert (2015) ໄດ້ຊີ້ໃຫ້ເຫັນ

ວ່າສາເຫດທີ່ມີຜົນຕໍ່ການພັດທະນາຮ້ານຂາຍຢາຄຸນນະພາບ ແມ່ນຄວາມຍາກງ່າຍຂອງການປະຕິບັດຕາມເກນມາດຕະຖານຮ້ານຂາຍຢາ, ການບໍ່ໃຫ້ຄວາມສໍາຄັນກັບຮ້ານຂາຍຢາຄຸນນະພາບ, ການຂາດແຮງຈູງໃຈໃນການພັດທະນາຮ້ານຂາຍຢາ, ການບໍ່ບັງຄັບດ້ວຍກົດໝາຍ, ການປະຊາສໍາພັນບໍ່ທົ່ວເຖິງ. ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Parinyarux & Yotsombut (2022) ໄດ້ສຶກສາທິດສະດີ ແລະ ຂັ້ນຕອນການປ່ຽນແປງໄປສູ່ການເຂົ້າຮ່ວມໂຄງການຮ້ານຢາຄຸນນະພາບຂອງເພສັດຊະກອນທີ່ເຈົ້າຂອງຮ້ານຂາຍຢາ ໃນອໍາເພີເມືອງ ຈັງຫວັດຊຽງໃໝ່ ໂດຍພົບວ່າ: ກຸ່ມຕົວຢ່າງສ່ວນໃຫ່ຍຍັງບໍ່ສົນໃຈເຂົ້າຮ່ວມໂຄງການຮ້ານຢາຄຸນນະພາບ ລວມທັງບໍ່ຮູ້ລາຍລະອຽດການເຂົ້າຮ່ວມໂຄງການບໍ່ເຫັນຜົນປະໂຫຍດທີ່ຊັດເຈນຂອງໂຄງການ ແລະ ບໍ່ເຫັນດ້ວຍກັບການເກັບຄ່າທໍານຽມໃນການເຂົ້າຮ່ວມໂຄງການ ຜົນຈາກການສໍາພັດພົບວ່າການຕັດສິນໃຈບໍ່ເຂົ້າຮ່ວມໂຄງການຮ້ານຂາຍຢາຄຸນນະພາບບໍ່ໄດ້ເກີດຈາກຂໍ້ຈໍາກັດຂອງຮ້ານຂາຍຢາພຽງຝ່າຍດຽວ ແຕ່ຍັງເກີດຈາກຂໍ້ຈໍາກັດອື່ນໆດ້ວຍເຊັ່ນ: ການຂາດປະຊາສໍາພັນໃຫ້ເປັນທີ່ຮູ້ຈັກຂາດການໃຫ້ຜົນປະໂຫຍດທີ່ເປັນຮູບປະທໍາກັບຮ້ານຂາຍຢາ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Noppadolladaporn (2005) ພົບວ່າສາເຫດທີ່ມີຜົນຕໍ່ການພັດທະນາຮ້ານຂາຍຢາແມ່ນຜູ້ປະກອບການຈະໃຫ້ຄວາມສໍາຄັນກັບຜົນປະໂຫຍດໃນການປະກອບການຫຼາຍກວ່າມາດຕະຖານຄຸນນະພາບ, ຈຶ່ງເຮັດໃຫ້ຜູ້ປະກອບການຍັງບໍ່ເຫັນເຖິງຄວາມສໍາຄັນຂອງການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ ແລະ ເມື່ອເປັນຮ້ານຂາຍຢາຄຸນນະພາບແລ້ວຈະເປັນການເພີ່ມພາລະວຽກຫຼາຍຂຶ້ນ, ລາຍໄດ້ຈາກການດໍາເນີນກິດຈະການຈະບໍເທົ່າເດີມ.

ຜົນການສຶກສາປັດໄຈທີ່ສົ່ງຜົນຕໍ່ແນວໂນ້ມພຶດຕິກໍາຄວາມຕ້ອງການໃນການພັດທະນາຮ້ານຂາຍຢາກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ມີ 2 ປັດໄຈຄື: ປັດໄຈມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ ແມ່ນສິ່ງຜົນທາງບວກຕໍ່ກັບແນວໂນ້ມພຶດຕິກໍາຄວາມຕ້ອງການພັດທະນາຮ້ານຂາຍຢາໃຫ້ກ້າວສູ່ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແລະ ສໍາລັບປັດໄຈມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ແມ່ນສິ່ງຜົນໃນທາງລົບ ຕໍ່ກັບແນ້ວໂນ້ມພຶດຕິກໍາຄວາມຕ້ອງການພັດທະນາຮ້ານຂາຍຢາໃຫ້ກ້າວສູ່ຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ທີ່ມີລະດັບຄວາມສໍາຄັນທາງສະຖິຕິທີ່ລະດັບ 0.1 ສອດຄ່ອງກັບຜົນການຄົ້ນຄວ້າຂອງ Urairat (2022) ພົບວ່າຄວາມຄິດເຫັນກ່ຽວກັບຂໍ້ກໍານົດວ່າມີຄວາມສໍາຄັນຕໍ່ມາດຕະຖານການໃຫ້ບໍລິການມີຄວາມສໍາພັນກັບຄວາມຄິດເຫັນກ່ຽວກັບການປະຕິບັດຕາມຂໍ້ກໍານົດໄດ້ຢ່າງຕໍ່ເນື່ອງທັງໃນພາບລວມ ແລະ ແຍກໝວດຍ່ອຍຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ ($P<0.0001$) ໂດຍພາບລວມມີຄ່າສໍາປະສິດສະຫະສໍາພັນເພຍສັນ ($r$) ເທົ່າກັບ 0.880 ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Thavornwattanayong et al (2016) ສຶກສາຄວາມຄິດເຫັນຂອງຜູ້ປະກອບການຮ້ານຂາຍຢາໃນຈັງຫວັດນະຄອນປະຖົມ ຕໍ່ການປະກາດຂອງກະຊວງສາທາລະນະສຸກເລື່ອງການກໍານົດກ່ຽວກັບສະຖານທີ່, ອຸປະກອນ ແລະ ວິທີການປະຕິບັດທາງເພສັດຊະກໍາຊຸມຊົນໃນສະຖານທີ່ຂາຍຢາແຜນປັດຈຸບັນຕາມກົດໝາຍວ່າດ້ວຍຢາ ພສ 2557 ຜົນການສຶກສາພົບວ່າ: ວິທີປະຕິບັດທາງເພສັດຊະກໍາຊຸມຊົນໃນສະຖານທີ່ຂາຍຢາແຜນປັດຈຸບັນໝວດບຸກຄະລາກອນເປັນເລື່ອງທີ່ຜູປະກອບການຮ້ານຂາຍຢາມີຄວາມຄິດເຫັນໃນການປະຕິບັດຕາມໄດ້ຫຼາຍທີ່ສຸດ, ສ່ວນໝວດການໃຫ້ບໍລິການທາງເພສັດຊະກໍາກັບຜູ້ປ່ວຍເປັນເລື່ອງທີ່ຜູ້ປະກອບການຮ້ານຂາຍຢາມີຄວາມຄິດເຫັນໃນການປະຕິບັດຕາມໄດ້ນ້ອຍທີ່ສຸດ, ໂດຍສິ່ງທີ່ຜູ້ປະກອບການເຫັນວ່າເປັນ

ອຸປະສັກ ແລະ ຕ້ອງການໃຫ້ລັດສະໜັບສະໜູນໄດ້ແກ່ເລື່ອງໃຫ້ພາກລັດອອກແບບຟອມທີ່ເປັນມາດຕະຖານດຽວກັນໂດຍສະເພາະໃນເລື່ອງກາສະຫຼາດເທິງຊອງບັນຈຸຢາ, ງົບປະມານເລື່ອງປັງປຸງສະຖານທີ່ຂາຍຢາ, ໃຫ້ຄໍາປຶກສາ ແລະ ແນະນໍາການໃຊ້ຢາຕິດຕໍ່ກັນ.

## 5. ສະຫຼຸບ

ຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ແມ່ນມີຄວາມຮູ້ຄວາມເຂົ້າໃຈໂດຍລວມຕໍ່ເກນມາດຕະຖານຄຸນນະພາບ GPP ຢູ່ໃນລະດັບຫຼາຍ ເຊິ່ງໃນນີ້ແມ່ນມີຄວາມຮູ້ຄວາມເຂົ້າໃຈຫຼາຍທີ່ສຸດຕໍ່ກັບເກນມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບຂອງຢາ, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບຫຼາຍຕໍ່ກັບເກນມາດຕະຖານດ້ານການໃຫ້ບໍລິການຂອງຮ້ານຂາຍຢາ ແລະ ຕໍ່ກັບເກນມາຕະຖານດ້ານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບປານກາງຕໍ່ກັບເກນມາດຕະຖານດ້ານດ້ານລະບົບການເກັບຂໍ້ມູນຂອງຮ້ານຂາຍຢາ.

ຜູ້ປະກອບການທີ່ໃຫ້ຄວາມສໍາຄັນໃນການພັດທະນາຢູ່ໃນລະດັບຫຼາຍທີ່ສຸດ ຕໍ່ກັບການພັດທະນາຮ້ານຂາຍຢາເພື່ອໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ GPPເຊິ່ງໃນນີ້ຜູ້ປະກອບການໃຫ້ຄວາມສໍາຄັນຕໍ່ການພັດທະນາມາດຕະຖານດ້ານການບໍລິຫານ-ຄວບຄຸມຄຸນນະພາບຢາໃນລະດັບຫຼາຍທີ່ສຸດໃນລໍາດັບທໍາອິດ, ຮອງລົງມາແມ່ນໃຫ້ຄວາມສໍາຄັນໃນການພັດທະນາມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂາອະນາໄມຂອງຮ້ານຂາຍຢາ, ຖັດມາແມ່ນໃຫ້ຄວາມສໍາຄັນພັດທະນາມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກໍາ), ໃຫ້ຄວາມສໍາຄັນພັດທະນາມາດຕະຖານດ້ານບໍລິການ ແລະ ການມີສ່ວນຮ່ວມໃນຊຸມຊົນ ແລະ ສັງຄົມ ແລະ ລໍາດັບສຸດທ້າຍແມ່ນໃຫ້ຄວາມສໍາຄັນໃນການພັດທະນາມາດຕະຖານດ້ານການບໍລິຫານຈັດການເພື່ອຄຸນນະພາບ.

ແນວໂນ້ມພຶດຕິກໍາໃນການພັດທະນາຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ສ່ວນຫຼາຍຜູ້ປະກອບການຮ້ານຂາຍຢາໃນເຂດນະຄອນຫຼວງພະບາງ ແມ່ນເປັນຜູ້ທີ່ເຄີຍໄດ້ຮັບຮູ້ຂໍ້ມູນກ່ຽວກັບມາດຕະຖານຮ້ານຂາຍຢາຄຸນນະພາບ GPP ແລະ ໄດ້ຮັບຮູ້ຂໍ້ມູນຈາກພະແນກສາທາແຂວງຫຼວງພະບາງ, ເປັນຜູ້ທີ່ມີຄວາມຕ້ອງການທີ່ຈະພັດທະນາຮ້ານຂາຍຢາໃຫ້ກາຍເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ໂດຍໃຫ້ເຫດຜົນວ່າການເປັນຮ້ານຂາຍຢາມາດຕະຖານຄຸນນະພາບ (GPP) ແມ່ນມີຜົນປະໂຫຍດຕໍ່ການດໍາເນີນທຸລະກິດ ແລະ ປັດໄຈທີ່ສົ່ງຜົນຕໍ່ແນວໂນ້ມພຶດຕິກໍາຄວາມຕ້ອງການທີ່ມີຕໍ່ການພັດທະນາຮ້ານຂາຍຢາສູ່ມາດຕະຖານຄຸນນະພາບ (GPP) ຂອງຜູ້ປະກອບການຮ້ານຂາຍຢາ ໃນນະຄອນຫຼວງພະບາງ ປະກອບມີ 2 ປັດໄຈທີ່ສົ່ງຜົນຄື: ປັດໄຈມາດຕະຖານດ້ານການໃຫ້ບໍລິການຂອງບຸກຄະລາກອນ (ເພສັດຊະກອນ) ແລະ ປັດໄຈມາດຕະຖານດ້ານອາຄານສະຖານທີ່ ແລະ ສຸຂະອະນາໄມ ຂອງຜູ້ປະກອບການຮ້ານຂາຍຢາ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Noppadolladaporn, A. (2005). *Preparedness and importance of current drug store operators towards on the standards Drugstores of the Pharmacy Council: A case study of modern drugstores in*

*UdonThani District that are not yet participating in the development project and guarantee the quality of the drug store*. Report of Independent Study. Master of Science Degree. Khon Kaen: Khon Kaen University.

Chalongsuk, R., Sangchan, T., Nattakarn, P., Chaisuvunarad, T., & Leungpoonlarb, P. (2007). Pharmacy entrepreneurs' opinion survey on barriers for enrolling in community pharmacy development and accreditation program. *Journal of Health Research. 21* (1). ISSN: 08574421. p. 43-53.

Chariyasirisuk, S., & Saokaew, S. (2020). Inspection of good pharmacy practice among modern drugstores in Kamphaengphet. *Thai Journal of Pharmacy Practice*. *12* (1). 2020. P.174-184.

Gay, L. R., & Airasian, P. (2003). *Educational research: Competencies for analysis and applications* (7th ed.). Upper Saddle River, NJ: Pearson Education.

Karnman, C. (2012). *Attitude of Drugstore entrepreneurs in Mueang Lampang District Towards joining community pharmacy development and accreditation program of the pharmacy council* [Graduate thesis], Chang Mai University. http://cmuir.cmu.ac.th/jspui/handle/6653943832/10247.

Chuntaravichit, U. (2020). Development model to upgrade good pharmacy practice (GPP) standards in drugstore, Singburi. Public Health Office. *Singburi Hospital. 29*(1).p. l1.

Lanka, S. (2019). *Guideline on good pharmacy practice (GPP).* National medicine regulatory authority. No.120, Norris Canal Rd. Colombo 01000.

Onprasert, P. (2015). *A Development approach for pharmacy to reach standards of quality pharmacy : Yala Province*[ Master thesis], Songkla University.

Parinyarux, P., & Yotsombut, K. (2022). Importance and awareness of the good pharmacy practice from drugstore clients' perspectives. *Thai Journal of Pharmacy Practice. 14*(3). p. 701-711.

Petchboun, K. (2019). *An influence of drug store operations according to community pharmacy accreditation standard on performance measured by balanced scorecard of drug store in five Southern border Province* [ Master thises], Songkla University.

Pornpanawan, L., & Imamee, L. (2023). Factors enhancing performance on good pharmacy practice of modern drugstores in Chachoengsao Province. *Thai Pharmaceutical and Health Science Journal.18*(2). p.175-182.

Siljiru, T. (2010). *Research and statistical data analysis by SPSS and AMOS* (11th ed.). ISBN: 9789741044108. Bangkok: business R and D ordinary partnership.

Sombutpoothon, P. (2021). *Factors on drug store with good pharmacy practice to abide the criterion of the quality pharmacy at Chonburi Province* [ Master thises]. Naresuan University.

Tungsawatdirat, T., Kongchai, K., & Maneemai, O. (2018). Behaviors and attitudes of medication label writing according to the good pharmacy practice of Northern community pharmacists. *Thai Bulletin of Pharmaceutical Sciences .13*. p. 117–127.

Thavornwattanayong, W., Yuklanthuan, C., Panyakrua, P., Nakarin, R., & Athitrakoonlert, E. (2016). Pharmacy owners' opinions in NAKHON PHATHOM Province on the notification

of the Ministry of public Health B.E 2014 on the regulations of setting, Equipment and good pharmacy practice. *Thai Bulletin of Pharmaceutical Sciences*.*11*(2). P. 27-44.

Urairat, J. (2022). *The opinion on the notification of the Ministry of Public Health B.E. 2014 on the regulations of setting*. Equipment and good Pharmacy Practice in Drug Stores Songkhla Province.

World Health Organization. (2020). *Joint FIP/WHO guidelines on good pharmacy practice: standards for quality of pharmacy services. In: WHO Expert Committee on Specifications for Pharmaceutical Preparations.* New York.. p. 310-23.

Wannathong, P. (2018). *Service quality of pharmacy service in client's perspective*. Center for Continuing Pharmacy Education (5002-1-000-004-05-2561). https://ccpe.pharmacycouncil.org/index.php?option=article_detail&subpage=article_detail&id=471.